ສຳນັກງານໃຫຍ່

ເລກທີ: 3726 /ທຄຕລ 2026
ນະຄອນຫຼວງວຽງຈັນ, ວັນທີ: 21 OCT 2026

ໜັງສືແຈ້ງເຊີນ

ເຖິງ: ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ໃນນະຄອນຫຼວງວຽງຈັນ.

ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ Software Endpoint Detection and Response (FortiEDR).

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນເພື່ອຊາບ, ທຄຕລ ມີຄວາມຕ້ອງການ Software Endpoint Detection and Response (FortiEDR), ເພື່ອນຳໃຊ້ເຂົ້າໃນວຽກງານ ຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

	Specification
Brand	FortiEDR (On-Premise, Air-Gapped Deployment)
License Capacity	500 endpoints
License Type	Discover, Protect, Respond (On-Premise), 3 Years
Platform Support	Windows, macOS, Linux, Android, iOS; VMware Horizon & Citrix VDI
Feature	NGAV, Ransomware & Fileless Protection, Virtual Patching, Device/Application Control, Automated Playbooks, Rollback, Forensics, Threat Hunting, Vulnerability Management, MITRE ATT&CK Mapping
Integration	FortiGate, FortiNAC, FortiSandbox, SIEM/SOAR, ZTNA (or equivalent)
Ad-on Service	Included FortiCare BPS Subscription for FortiEDR 1 Year FortiEDR Best Practice Service for up to 500 Endpoints/users
Support + MA	FortiCare Premium 3 years
Post Sale Support	- Can open case via following channels; Web, Chat, Email or Phone - Case(s) can be escalated based on severity level - SLA: 24x7 - Onsite support by Vendor's Authorized Service Provider

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນ ແລະ ສິນຄ້າ ດັ່ງກ່າວມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

❖ **<u>ເອກະສານ ຊອງທີ1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2024-2026 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ. ສາມາດເປີດ Case & Ticket ໄດ້.

2. ຕ້ອງເປັນບໍລິສັດຜູ້ສະໜອງພາຍໃນ ສປປລາວ ທີ່ມີໃບຮອງຮັບ ຫລື ໂຕແທນຢ່າງເປັນທາງການຂອງ ຜະລິດຕະພັນດັ່ງກ່າວ ມີທີມງານຊັບພອດທີ່ສາມາດໃຫ້ຄຳປຶກສາ ແລະ ແກ້ໄຂບັນຫາໄດ້.
3. ເອກະສານລາຍລະອຽດສະເປັກໜ້າວຽກ, ການຮັບປະກັນ, ໄລຍະເວລາການຈັດສົ່ງເຄື່ອງ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
4. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ **ວັນສຸກ ວັນທີ 30/10/2026 ເວລາ 11:00 ໂມງ ໂດຍການສົ່ງ ຟາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la ເພື່ອໃຫ້ ສູນໄອທີໄດ້ກວດລາຍລະອຽດ, ຂໍ້ມູນທີ່ຈຳເປັນ ແລະ ສະເປັກ.**

❖ **<u>ເອກະສານ ຊອງທີ2:</u> (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%, ໂດຍສະເໜີເປັນ: Technical Support Service & MA 03 ປີ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 11/02/2027)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນພຸດ **ວັນທີ 11/11/2026 ເວລາ 13:30 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານ ການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງ ປະຊຸມຊັ້ນ 5 ອາຄານ C.

<u>ໝາຍເຫດ:</u>

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດ ຂ້າງເທິງ.

ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນ ສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

ການຊຳລະ: ຊຳລະ 100% ຂອງມູນຄ່າທັງໝົດພາຍໃນ 25 ວັນ ລັດຖະການ, ພາຍຫລັງໄດ້ຮັບເຄື່ອງຄົບຖ້ວນ , ຕິດຕັ້ງສຳເລັດ ແລະ ກວດກາຢັ້ງຢືນຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ ຫຼື ຄະນະກຳມະການຕິດຕາມ ກວດກາ.

ດັ່ງນັ້ນ, ຈຶ່ງຂໍອະນຸເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

สายจิด สิมมะวิง

(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ……/ທຄຕລ, ລົງວັນທີ ……..

ລ/ດ	ຜູ້ສະໜອງ	ເງື່ອນໄຂ									ໝາຍເຫດ
		ໃບທະບຽນວິສາຫະກິດ	ໃບຢັ້ງຢືນການເສຍອາກອນ	ໃບອະນຸຍາດດຳເນີນທຸລະກິດ	ໄລຍະເວລາໃນການດຳເນີນທຸລະກິດ	ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່)	ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ	ປະເທດຜະລິດ	ການຮັບປະກັນສິນຄ້າ	ກຳນົດສົ່ງ (ວັນ)	
1	ບ/ສ……	(ເລກທີ/ລົງວັນທີ)	(ເລກທີ/ລົງວັນທີ)	(ເລກທີ/ລົງວັນທີ)	…. ປີ	(ໃຫ້ລະບຸ)			…. ປີ	……	

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .....
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: